## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 7 ມະກະຣາ 2024 (01-07-2024)

---

## ຄວາມປ້ອງກັນພັຍຂອງພຣະນາມພຣະເຈົ້າ

**ຈຸດສຳຄັນໃນບົດຮຽນ**: ເຮົາສາມາດໄວ້ວາງໃຈພຣະເຈົ້າທີ່ຈະເສີມກຳລັງແລະຊ່ວຍເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ລູກໆຂອງຂ້າພະເຈົ້າໄດ້ເອີ້ນຂ້າພະເຈົ້າວ່າ "ຜູ້ຄຸ້ມກັນ" ດ້ວຍຮອຍຍິ້ມ. ຜ່ານຫຼາຍໆປີ, ຂ້າພະເຈົ້າໄດ້ເອົາຄວາມສ່ຽງສ່ວນຕົວເຂົ້າສູ່ໜ້າວຽກທີ່ອັນຕລາຍແລະງານອື່ນໆທີ່ຄ້າຍໆກັນ. ແລ້ວ, ຫຼັງຈາກລູກໆໄດ້ເກີດມາ, ຂ້າພະເຈົ້າໄດ້ກາຍເປັນຄົນເຂົ້າໃຈກ່ຽວກັບຄວາມປອດພັຍຂອງເຂົາແລະຂ້ອນຂ້າງລະວັງເກີນສ່ວນ. ເຖິງແມ່ນວ່າຂ້າພະເຈົ້າພຍາຍາມທຳຕົວໃຫ້ສົມເຫດສົມຜົນ, ໃນເວລາທີ່ຂ້າພະເຈົ້າອາດລະແວງເກີນໄປ. ເຫດການນີ້ງນຳບັນຫາເຂົ້າໄປໃນມະໂນພາບ. ຂນະທີ່ພັລຍາແລະຂ້າພະເຈົ້າກຳລັງອອກເດີນທາງ, ລູກສາວຂອງພວກເຮົາໄດ້ປະສົບອຸບັດຕິເຫດລົດຕຳກັນຮ້າຍແຮງ ໃກ້ວິທຍາລັຍຂອງລາວ. ປະຕິກິຣິຍາທຳອິດຂອງພວກເຮົາຄື ເດີນທາງກັບບ້ານ. ຂ້າພະເຈົ້າຕ້ອງປ້ອງກັນລູກຂອງພວກເຮົາ. ພຣະເຈົ້າໄດ້ເຕືອນຂ້າພະເຈົ້າວ່າຖ້າຂ້າພະເຈົ້ານັ່ງຄຽງຂ້າງລາວ, ຂ້າພະເຈົ້າກໍບໍ່ສາມາດປ້ອງກັນອຸບັດຕິເຫດໄດ້. ຖ້າພຣະເຈົ້າບໍ່ປ້ອງກັນລູກຂອງພວກເຮົາ, ຄວາມພຍາຍາມຂອງຂ້າພະເຈົ້າກໍໄຮ້ປໂຍດ. ພວກເຮົາອະທິຖານກັບລາວທາງໂທຣະສັບ ແລະມອບລາວໄວ້ກັບພຣະຜູ້ເປັນເຈົ້າ.

ທົ່ວປະເທດ, ຄວາມປອດພັຍໄດ້ກາຍເປັນບັນຫາຕົ້ນຕໍໃນທາງເລືອກສ່ວນຕົວ ແລະນະໂຍບາຍສາທາຣະນະ. ໃນຂນະທີ່ພວກເຮົາຄວນໃຊ້ມາຕການທີ່ສົມເຫດສົມຜົນ ເພື່ອປົກປ້ອງຄອບຄົວຂອງພວກເຮົາແລະຄົນອື່ນ, ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດຜ່ອນຄາຍຈິດໃຈຂອງພວກເຮົາໄດ້. ພວກເຮົາສາມາດວາງໃຈພຣະອົງ ໃນສະຖານະການທຸກປະເພດກັບຄອບຄົວແລະກັບຊີວິດຂອງເຮົາ. ການວາງຄວາມເຊື່ອຂອງເຮົາໃນພຣະອົງ, ພວກເຮົາມີສັນຕິສຸກ.

*ມີຫຍັງແດ່ທີ່ຄົນເຮົາຊອກຫາເພື່ອໃຊ້ປ້ອງກັນພັຍ?*

**ພຣະຄັມພີກ່າວວ່າແນວໃດ**: (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ເພງສັຣເສີນ 91:1-6.

*[1]ຜູ້ທີ່ໄປເພິ່ງຄວາມປອດພັຍໃນພຣະເຈົ້າອົງສູງສຸດແລະຜູ້ທີ່ອາສັຍຢູ່ພາຍໃຕ້ຮົ່ມເງົາຂອງພຣະຜູ້ຊົງອຳນາດຍິ່ງໃຫຍ່. [2]ຈະເວົ້າກັບພຣະ*
*ອົງວ່າ, "ພຣະອົງຊົງເປັນຜູ້ປ້ອງກັນແລະຄຸ້ມຄອງຂອງຂ້ານ້ອຍ ພຣະອົງຊົງເປັນພຣະເຈົ້າຂອງຂ້ານ້ອຍ ຂ້ານ້ອຍໄວ້ເນື້ອເຊື່ອໃຈໃນ*
*ພຣະອົງ." [3]ພຣະອົງຊົງຊ່ວຍທ່ານໃຫ້ພົ້ນຈາກບ້ວງແຮ້ວອັນລັບລີ້ທຸກຢ່າງແນ່ນອນ ແລະຈາກພະຍາດໂລຄານາໆປະການ. [4]ພຣະອົງ*
*ຊົງຕຸ້ມທ່ານດ້ວຍປີກຂອງພຣະອົງ ທ່ານຈະປອດພັຍພາຍໃຕ້ການພິທັກຮັກສາຂອງພຣະອົງ ຄວາມສັດຊື່ຂອງພຣະອົງຈະຄຸ້ມຄອງ*
*ແລະປ້ອງກັນທ່ານໄວ້. ທ່ານບໍ່ຕ້ອງຢ້ານອັນຕລາຍໃນເວລາກາງຄືນຫລື ລູກທະນູທີ່ຍິງມາຢ່າງກະທັນຫັນໃນເວລາກາງເວັນ. [6]ຫລືພະ-*
*ຍາດໂລຄາທີ່ເກີດຕິດຕໍ່ໃນເວລາກາງຄືນຕລອດທັງໂລກລະບາດທີ່ເກີດຂຶ້ນໃນເວລາກາງເວັນ.*

ພວກເຮົາອາດນອນຫຼັບດີກວ່າດ້ວຍການຫຼີກເວັ້ນຟັງຂ່າວກ່ອນນອນ. ຈາກອາຊຍາກັມທ້ອງຖິ່ນສູ່ຄວາມຫຍຸ້ງຍາກທາງເສຖກິດຮອດຄວາມຂັດແຍ້ງຂອງໂລກ, ສາຍການບິນກໍແຜດສຽງຂ່າວຮ້າຍ. ຫຼາຍຄົນໄດ້ຈັດຄວາມປອດພັຍເປັນການເອົາໃຈໃສ່ຂນານເອກຂອງເຂົາ. ຜູ້ຂຽນເພງສັຣເສີນບົດ91 ໄດ້ເຂົ້າໃຈຄວາມກັງວົນຂອງເຮົາ ແລະໄດ້ເລົ່າວ່າຈະເພິ່ງໃນການປ້ອງກັນພັຍຂອງພຣະເຈົ້າຢ່າງໃດ. ຂໍ້ພຣະຄັມພີສອງຂໍ້ທຳອິດເປັນພຍານເຖິງການເຊື່ອວາງໃຈໃນການປ້ອງກັນທີ່ເຊື່ອຖືໄດ້ຂອງພຣະເຈົ້າ. ແລ້ວຜູ້ເວົ້າຈຶ່ງໄດ້ສເນີຄຳແນະ

ນຳແກ່ຜູ້ອ່ານ. ສຸດທ້າຍ, ພຣະເຈົ້າໄດ້ຍົກຄຳສັນຍາປ້ອງກັນພັຍຂອງພຣະອົງຂຶ້ນມາໃນສາມຂໍ້ສຸດທ້າຍ. ເພງສັຣເສີນຮັບປະກັນແກ່ເຮົາວ່າ ພຣະອົງຊົງຫ່ວງໃຍທຸກຄົນທີ່ວາງໃຈເຊື່ອພຣະອົງ. ເພື່ອເປັນພື້ນຖານຄວາມໄວ້ວາງໃຈໃນພຣະອົງ, ຜູ້ຂຽນເພງສັຣເສີນໄດ້ເນັ້ນສີ່ຊື່ຂອງພຣະອົງ:

1. **ພຣະເຈົ້າສູງສຸດ.** ທ່າມກາງຊົນຊາດທີ່ເຊື່ອພຣະເຈົ້າຫຼາຍອົງ, ຊາວຢິວເຊື່ອພຣະເຈົ້າທ່ຽງແທ້ອົງດຽວ. ພຣະອົງຊົງຣິດຍິ່ງໃຫຍ່-ເໜືອພະອື່ນທັງປວງ.
2. **ພຣະເຈົ້າຍິ່ງໃຫຍ່.** ໄພ່ພົນທີ່ເຊື່ອລີ້ພັຍຢູ່ພາຍໃຕ້ "ຮົ່ມເງົາຂອງພຣະເຈົ້າຍິ່ງໃຫຍ່." ແປເປັນ ຊາດາຍ(Shaddai), ຊື່ນີ້ມີຄວາມໝາຍວ່າ "ຜູ້ຊົງຣິດຍິ່ງໃຫຍ່."
3. **ພຣະຜູ້ເປັນເຈົ້າ.** "**Lord**" ຕົວໜັງສືໃຫຍ່ແທນຊື່ພຣະເຈົ້າແຫ່ງພຣະສັນຍາ. ແປຄຳວ່າ (*YHWH), ບາງເທື່ອຢືມມາຈາກຊື່ຢາເວ (Yahweh) ຫຼື ເຢໂຫວາ (Jehovah).* ພວກເຮົາສາມາດເພິ່ງພຣະເຈົ້າໄດ້ ບໍ່ແມ່ນຍ້ອນຄຸນຄວາມດີຂອງເຮົາ, ແຕ່ຍ້ອນຄວາມສັມພັນຂອງພຣະອົງກັບເຮົາ.
4. **ພຣະເຈົ້າຂອງຂ້ານ້ອຍ.** ຜູ້ຂຽນເພງສັຣເສີນຍັງໄດ້ໃຊ້ຊື່ ເອໂລຮິມ (*Elohim)* ສຳລັບພຣະເຈົ້າໃນຂໍ້ສອງ. ໂມເຊໄດ້ໃຊ້ຊື່ນີ້ໃນປະຖົມການ ເມື່ອອ້າງເຖິງພຣະຜູ້ສ້າງ. ຍ້ອນຄວາມສັມພັນສ່ວນຕົວຂອງພຣະເຈົ້າກັບເຮົາ ແລະການປ້ອງກັນພັຍຊົງຣິດອຳນາດຂອງພຣະອົງແກ່ເຮົາ, ພວກເຮົາສາມາດວາງໃຈພຣະອົງໄດ້.

ຜູ້ຂຽນຮັບປະກັນໃຫ້ຜູ້ອ່ານວ່າ ພວກເຂົາສາມາດເພິ່ງພຣະຜູ້ເປັນເຈົ້າໄດ້. ຮູບພາບສອງຄຳສະແດງໃຫ້ເຫັນວິທີທີ່ພຣະເຈົ້າໄດ້ພົວພັນກັບປະຊາກອນຂອງພຣະອົງຄື:

- ພຣະເຈົ້າເປັນຜູ້ກອບກູ້ໄດ້ປົດປ່ອຍເຂົາ ດັ່ງປ່ອຍນົກຈາກກັບດັກ. ພຣະເຈົ້າກອບກູ້ໄພ່ພົນຂອງພຣະອົງຈາກໂຣກລະບາດແລະພັຍວິບັດທັງປວງ, ດັ່ງທີ່ພຣະອົງໄດ້ກອບກູ້ເຂົາຈາກສັດຕູຂອງເຂົາ.
- ຄຳອຸປະມາທີສອງທຽບພຣະເຈົ້າເໝືອນດັ່ງແມ່ນົກພິປີກຕຸ້ມລູກນ້ອຍຂອງມັນ. ພຣະເຈົ້າຈະຕຸ້ມພວກເຮົາດ້ວຍ "ປີກຂອງພຣະອົງ", ໃນເມື່ອເຮົາ "ລີ້ພັຍ" ຢູ່ໃຕ້ປີກຂອງພຣະອົງ.

ຜົນດີຄືຄວາມຮັກຂອງພຣະເຈົ້າທີ່ເປັນບ່ອນເພິ່ງ, ພວກເຮົາບໍ່ມີເຫດທີ່ຕ້ອງຢ້ານ.

## 2. ເພງສັຣເສີນ 91:9-13.

*[9]ເນື່ອງຈາກວ່າທ່ານໄດ້ເອົາພຣະຜູ້ເປັນເຈົ້າເປັນຜູ້ປ້ອງກັນທ່ານ ແລະເອົາພຣະເຈົ້າອົງສູງສຸດເປັນທີ່ເພິ່ງຂອງທ່ານ. [10]ພັຍວິບັດຈະບໍ່ມາ
ຕົກຖືກທ່ານ ຄວາມໂຫດຮ້າຍຈະບໍ່ມາໃກ້ເຮືອນຂອງທ່ານ. [11]ພຣະເຈົ້າຈະຊົງສັ່ງພວກເທວະດາລົງມາຮັກສາເບິ່ງແຍງທ່ານໃນທຸກບ່ອນ
ທີ່ທ່ານໄປ. [12]ພວກເທວະດາຈະອູ້ມທ່ານໄວ້ເພື່ອບໍ່ໃຫ້ທ່ານສະດຸດກ້ອນຫີນ. [13]ທ່ານຈະຜາບແພ້ສິງຮ້າຍ ແລະງູເຜີດ ໂດຍຢຽບມັນລົງຢູ່
ໃຕ້ພື້ນຕີນຂອງທ່ານ.*

ຄົນສ່ວນຫຼາຍປາຖນາຢາກມີຊີວິດຢ່າງສງົບ. ຕ່າງຈາກການເປັນຢູ່ປະຈຳ, ຄວາມສງົບ ໝາຍເຖິງການກຳຈັດປັດເປົ່າການຂັດແຍ້ງຢ່າງສິ້ນເຊີງ. ໃນໂລກທີ່ເຊື່ອມໂຊມນີ້, ພວກເຮົາມັກຈະປະເຊີນກັບການຂັດຄ້ານຈາກຄົນແລະສະພາບການຕ່າງໆ. ເຖິງວ່າຈະມີສະຖານະການທີ່ທ້າທາຍຕ່າງໆ, ຜູ້ເຊື່ອຍັງສາມາດເພິ່ງຣິດອຳນາດຂອງພຣະເຈົ້າໄດ້ ເພາະພຣະອົງສາມາດປົກປ້ອງຄຸ້ມຄອງເຮົາໄດ້. <u>ບົດນີ້ບໍ່ແມ່ນຄຳສັນຍາທົ່ວໄປວ່າ ພັຍອັນຕລາຍຈະບໍ່ມາແຕະຕ້ອງຄົນທີ່ວາງໃຈໃນພຣະເຈົ້າໄດ້</u>. ເຖິງແມ່ນວ່າເວລາເຮົາວາງໃຈໃນອົງພຣະຜູ້ເປັນເຈົ້າກໍຕາມ, ພວກເຮົາສາມາດ-ແລະຍັງຕ້ອງ-ປະເຊີນກັບຄວາມເຈັບ, ຄວາມທຸກທໍຣະມານ, ແລະຄວາມຕາຍ. ເຖິງຢ່າງໃດກໍດີ, ພວກເຮົາສາມາດເພິ່ງໃນຄວາມຮັກແລະຣິດອຳນາດຂອງພຣະເຈົ້າເຂົ້າມາຊ່ວຍເຮົາ. ບາງຄັ້ງພຣະອົງປ້ອງກັນເຮົາຈາກມານຮ້າຍ. ບາງເທື່ອພຣະອົງໃຫ້ພລັງເຮົາໃນທ່າມກາງພັຍອັນຕລາຍຮອບດ້ານ. ບາງເທື່ອພຣະອົງໃຊ້ອາການເຈັບປວດຂອງເຮົາເພື່ອໃຫ້ກຳລັງໃຈຄົນອື່ນໆ. ພຣະເຈົ້າອະນຸຍາດໃຫ້ເຮົາຜ່ານຜ່າຄວາມຫຍຸ້ງຍາກ, ແຕ່ພຣະອົງບໍ່ເຄີຍປ່ອຍປະເຮົາຈັກເທື່ອ. ພຣະອົງເສີມກຳລັງແລະຍົກຊູ

ເຮົາ. ໃນຫຼາຍກໍຣະນີ, ພຣະເຈົ້າປົດປ່ອຍເຮົາ. ໃນທຸກກໍຣະນີ, ພຣະອົງຍັງຄົງສະຖິດຢູ່ນຳເຮົາ. ດັ່ງທີ່ທ່ານໂປໂລໄດ້ເຕືອນຊາວໂຣມັນວ່າ, ພຣະເຈົ້າຊົງຮ່ວມກັບຄົນທັງຫຼາຍທີ່ຮັກພຣະອົງ ເພື່ອໃຫ້ເກີດຜົນດີໃນທຸກສິ່ງ (ໂຣມ 8:28). ເພງສັຣເສີນຂໍ້11-12 ສາມາດຕີຄວາມໝາຍໄດ້ສອງທາງ, ເນື້ອໃນຂອງປໂຍກທາງຕົງນັ້ນຜູ້ຂຽນເພງສັຣເສີນໄດ້ສະແດງເຖິງວິທີທີ່ພຣະເຈົ້າຍົກເຮົາຂຶ້ນເພື່ອຊ່ອຍເຮົາໃຫ້ພົ້ນຈາກອັນຕະລາຍ. ບາງຄັ້ງພຣະເຈົ້າໃຊ້ພວກ ເທວະດາອ້ອນວອນເພື່ອພວກເຮົາ.

ພວກເຮົາຍອມຮັບວ່າພາກນີ້ ເປັນການທົດລອງຂອງຊາຕານຕໍ່ພຣະເຢຊູ (ມທ 4:6). ມານໄດ້ໃຊ້ພຣະຄັມພີຜິດຂໍ້ນີ້ເພື່ອຈຸດປະສົງຊົ່ວຮ້າຍຂອງມັນ. ການທົດສອບການວາງໃຈພຣະບິດາຂອງພຣະເຢຊູ, ຊາຕານພຍາຍາມເຍົ້າພຣະເຢຊູໂດດຈາກຫຼັງຄາພຣະວິຫານ. ກົບຄືນໄປບົດນີ້, ມັນຫາທາງເຮັດໃຫ້ພຣະເຢຊູດຶງເອົາພຣະບິດາສູ່ການທົດສອບ. ພຣະຄຣິດເຂົ້າໃຈເຈຕນາຂອງເພງສັຣເສີນ 91:11-12 ແລະປະຕິເສດທີ່ຈະຖືກຫຼອກ. ພຣະອົງຊາບດີວ່າຄຳເວົ້າຂອງພຣະເຈົ້າບໍ່ສາມາດນຳໃຊ້ເພື່ອບັງຄັບພຣະເຈົ້າເຂົ້າໃນກັບ ຫຼືເຮັດໃຫ້ພຣະອົງປະພຶດຕາມຄວາມຕ້ອງການຂອງເຮົາ. ເທວະດາຂອງພຣະເຈົ້າໄດ້ອູ້ມຊູພຣະເຢຊູໃນການທົດລອງ, ດັ່ງທີ່ເຂົາເຮັດກັບເຮົາ. ການທົດລອງໃນຖິ່ນກັນດານ, ເຂົາໄດ້ຮັບໃຊ້ພຣະເຢຊູຫຼັງຈາກພຣະອົງສຳເຣັດການຕໍ່ສູ້ສັດຕູ. ພຣະເຈົ້າຍັງໄດ້ໃຊ້ອິດທິຣິດຊ່ອຍເຮົາອີກ. ລາຍລະອຽດຂອງການປົກປັກຮັກສາໃນຂໍ້ 13 ຍົກເປັນຕົວຢ່າງວິທີພຣະເຈົ້າຕໍ່ສູ້ແທນເຮົາ. ພວກເຮົາສາມາດເພິ່ງພາຢ່າງປອດພັຍໃນການສະຖິດນຳຂອງພຣະຜູ້ເປັນເຈົ້າເພາະຄວາມຈິງຫຼາຍປະການ.

- ພຣະເຈົ້າໄດ້ຕັ້ງພັນທະສັນຍາຄວາມສັມພັນກັບພວກເຮົາໃນພຣະຄຣິດ.
- ພຣະເຈົ້າສູງສຸດເປັນເຈົ້າຂອງອຳນາດສູງສຸດເພາະພຣະອົງຢູ່ສູງກວ່າທຸກສິ່ງ.
- ພວກເຮົາມີຄວາມປອດພັຍຖ້າເຮົາສືບຕໍ່ຢູ່ນຳພຣະອົງ.
- ພວກເຮົາສາມາດມີຊີວິດໂດຍປາສຈາກຄວາມຢ້ານເພາະວ່າພຣະເຈົ້າຊົງຫ່ວງໃຍເຮົາ.

ຄວາມໝັ້ນໃຈຂອງເຮົາບໍ່ແມ່ນເພິ່ງຄວາມສາມາດຂອງເຮົາ, ແຕ່ເພິ່ງໃນຣິດອຳນາດຄວາມຮັກຂອງພຣະອົງ. ບົດບາດຂອງເຮົາແມ່ນຕັ້ງໝັ້ນຢູ່ໃນພຣະອົງ ແລະວາງໃຈໃນຄວາມສັດຊື່ຂອງພຣະອົງ.

*ມີຄວາມຂັດແຍ້ງໃດທີ່ທ່ານສາມາດເອົາຊນະຍ້ອນການປົກປັກຮັກສາຂອງພຣະເຈົ້າ?*

## 3. ເພງສັຣເສີນ 91:14-16.

*[14]ພຣະເຈົ້າຊົງກ່າວວ່າ, "ເຮົາຈະຊ່ອຍຜູ້ທີ່ຮັກເຮົາໃຫ້ພົ້ນພັຍແລະ ຄຸ້ມຄອງຜູ້ທີ່ຮູ້ຈັກເຮົາ. [15]ເວລາລາວເອີ້ນຫາເຮົາ ເຮົາຈະຕອບລາວເມື່ອລາວຕົກຢູ່ໃນຄວາມທຸກຍາກລຳບາກເຮົາຈະຊ່ອຍຊີວິດລາວແລະ ໃຫ້ກຽດແກ່ລາວເຮົາຈະສະຖິດຢູ່ກັບລາວ. [16]ເຮົາຈະຕອບແທນລາວໂດຍໃຫ້ລາວມີຊີວິດຍືນຍາວແລະ ເຮົາຈະຊ່ອຍໃຫ້ລາວພົ້ນພັຍຢ່າງແນ່ນອນ."*

ການຕອບຖ້ອຍຖແລງຄວາມເຊື່ອຂອງຜູ້ຂຽນເພງສັຣເສີນ, ພຣະເຈົ້າໄດ້ຂັດຂວາງການຕອບໂຕ້. ການໃຊ້ບຸກຄົນທີສາມສາມາດໃຊ້ຖ້ອຍຄຳກັບຜູ້ຂຽນຫຼືຜູ້ອ່ານ. ຄວາມຈິງ, ມັນໃຊ້ກັບທຸກຄົນທີ່ຕັ້ງໃຈໃສ່ພຣະເຈົ້າ. ບັນຊີຄຳສັນຍາບໍ່ແມ່ນລວມໝົດ ແຕ່ໝາຍເຖິງວິທີຂອງພຣະເຈົ້າທຳງານແທນເຮົາ. ແຕ່ລະຖ້ອຍຄຳສະແດງເຖິງການຄ້ຳປະກັນຂອງພຣະເຈົ້າແກ່ຄົນທີ່ວາງໃຈພຣະອົງ.

- **ພຣະອົງປົດປ່ອຍແລະກູ້ພັຍເຮົາ.** ການປົດປ່ອຍຊີ້ໃຫ້ເຫັນສະຖານະການອັນຕລາຍທີ່ຂົ່ມຂູ່ສວັດດີການຂອງບາງຄົນ. ຄຳນີ້ອະທິບາຍທາງທີ່ພຣະເຈົ້າພາຄົນນັ້ນໄປຢ່າງປອດພັຍ, ຄືກັນກັບຜູ້ລ້ຽງແກະດຶງແກະໜີຈາກນັກລ່າ.
- **ພຣະອົງຈະປ້ອງກັນເຮົາ.** ທັນທີທີ່ເຮົາຖືກປົດປ່ອຍ, ພຣະເຈົ້າປ້ອງກັນຜູ້ເຊື່ອ ເພາະວ່າພວກເຮົາຮູ້ຈັກພຣະນາມຂອງພຣະອົງ. ພຣະເຈົ້າເຝົ້າຍາມໄພ່ພົນຂອງພຣະອົງ ເມືອນດັ່ງຫໍຄອຍສູງເຝົ້າຍາມເມືອງ. ຄວາມສັມພັນເຮົາກັບພຣະອົງເລີ່ມດ້ວຍການຮູ້ຈັກກັບພຣະອົງ, ບໍ່ພຽງແຕ່ຮູ້ກ່ຽວກັບພຣະອົງ.
- **ພຣະອົງຈະຕອບເຮົາ.** ໃນຄວາມສັມພັນຕໍ່ເນື່ອງນີ້, ພວກເຮົາສາມາດຮ້ອງຫາພຣະເຈົ້າໃນຄວາມຕ້ອງການຂອງເຮົາ ແລະພຣະອົງສັນຍາຈະຕອບເຮົາ. ພວກເຮົາສາມາດໝັ້ນໃຈວ່າພຣະອົງໄດ້ຍິນລູກຂອງພຣະອົງ. ເປັນຫຍັງພໍ່ແມ່ທີ່ດີຈະເມີນເສີຍຕໍ່ການຮ້ອງໄຫ້

ຂອງລູກ? <u>ພຣະເຈົ້າບໍ່ຕອບຕາມໃຈເຮົາທຸກຄັ້ງ, ແຕ່ ພຣະອົງໄດ້ຍິນເຮົາ, ແລະພຣະອົງຕອບເຮົາສເມີ.</u>

- **ພຣະອົງຈະຢູ່ນຳເຮົາຍາມເຮົາເດືອດຮ້ອນ.** ພຣະເຈົ້າສັນຍາຈະຢູ່ນຳເຮົາເວລາເຮົາມີບັນຫາບາງທີອາດເປັນຄຳສັນຍາທີ່ໝັ້ນໃຈທີ່ສຸດໃນພາກນີ້. ບາງຄັ້ງເຮົາຮູ້ສຶກໂດດດ່ຽວທີ່ສຸດໃນເວລາຄວາມຫຍຸ້ງຍາກຫຸ້ມລ້ອມເຮົາ. ຄອບຄົວແລະເພື່ອນອາດຫາຍໜ້າ, ພຣະເຈົ້າຈະບໍ່ປ່ອຍປະຫຼືຖິ້ມເຮົາຈັກເທື່ອ. ໃນເມື່ອພຣະອົງຢູ່ນຳ ເຮົາບໍ່ຕ້ອງຢ້ານຫຼືກົວເກງເລີຍ (ພະບັນຍັດສອງ 31:8).
- **ພຣະອົງຈະໃຫ້ກຽດເຮົາ.** ພຣະຜູ້ເປັນເຈົ້າບໍ່ພຽງແຕ່ກູ້ພັຍເຮົາຈາກພັຍອັນຕລາຍ ແຕ່ພຣະອົງຍັງໃຫ້ກຽດເຮົາໃນແຕ່ລະຂັ້ນຕອນ. ເຖິງຢ່າງໃດກໍຕາມ, ຫຼັກການແນະນຳວ່າພຣະເຈົ້າມອບສິ່ງທີ່ເຮົາຂາດເຂີນໃຫ້ເຮົາ. ເມື່ອພຣະເຈົ້າກູ້ພັຍ, ພຣະອົງຍົກຊູຄວາມຕ່ຳຕ້ອຍຂອງເຮົາຂຶ້ນສູ່ກຽດສັກສີອັນສູງສົ່ງ.
- **ພຣະອົງຈະເຮັດໃຫ້ເຮົາພໍໃຈໂດຍໃຫ້ຊີວິດຍືນຍາວ.** ໂດຍຜ່ານການແຊກແຊງຂອງພຣະເຈົ້າ, ຜູ້ເຊື່ອອາດປະສົບການ "ຊີວິດຍືນຍາວ". ຢ່າງໜ້າສົນໃຈ, ພຣະເຈົ້າສັນຍາຈະໃຫ້ "ຄວາມພໍໃຈ" ຕໍ່ຜູ້ສັດຊື່. ບາງຄົນມີອາຍຸຍືນຫຼາຍປີແຕ່ຢູ່ໃນຄວາມຂົມຂື່ນ ແລະໂສກເສົ້າ. ການສະຖິດຢູ່ດ້ວຍຂອງພຣະເຈົ້າຈັດຫາຄຸນນະພາບຊີວິດທີ່ຍອດຢ້ຽມ, ບໍ່ພຽງແຕ່ຍືດຊີວິດອອກໄປເທົ່ານັ້ນ.
- **ພຣະອົງຈະສະແດງໃຫ້ເຮົາເຫັນຄວາມພົ້ນຂອງພຣະອົງ.** ໃນທີ່ສຸດ, ພຣະຜູ້ເປັນເຈົ້າຈະ "ສະແດງ" ໃຫ້ເຫັນຄວາມພົ້ນຂອງພຣະອົງ. ຄຳເວົ້າແຕ່ລະຄຳເຫຼົ່ານີ້ສຳຄັນ. ບາງຄົນໄດ້ລອດພົ້ນ, ແຕ່ເຂົາຈະບໍ່ພົບຫຼັກຖານຄວາມພົ້ນໃນຊີວິດແຕ່ລະວັນ. ຄວາມບາບ, ຄວາມໂສກເສົ້າ, ຫຼືຄວາມສົງສັຍໄດ້ຂະໂມຍຄວາມຍິນດີໃນຄວາມພົ້ນຂອງເຂົາ (ພສສ 51:12). ຄວາມພໍໃຈແລະຄວາມປອດພັຍຂອງເຮົາບໍ່ໄດ້ຂຶ້ນກັບຄວາມພຍາຍາມຂອງເຮົາເອງ ແຕ່ໃນຄວາມເມດຕາຂອງພຣະເຈົ້າ. ພວກເຮົາເປັນສີພຣະຫັດຂອງພຣະອົງ, ສ້າງມາແລະຮັກສາໄວ້ໃນພຣະຄຣິດ ສຳລັບພຣະກຽດຂອງພຣະເຈົ້າ ແລະຜົນປໂຍດອັນດີຂອງເຮົາ (ອຟຊ 2:10). ແມ້ກະທັ້ງໃນເວລາເຮົາຮູ້ສຶກພັງທະລາຍລົງ, ພຣະເຈົ້າ-ຜູ້ເລີ່ມພາຣະກິດນີ້ໃນເຮົາ-ໄດ້ສັນຍາຈະສືບຕໍ່ສ້າງເຮົາຈົນກວ່າພຣະຜູ້ເປັນເຈົ້າສະເດັດກັບມາ (ຟລປ 1:6).

*ການຮູ້ຈັກຊື່ພຣະເຈົ້າຊ່ວຍການເດີນຂອງທ່ານກັບພຣະອົງຢ່າງໃດ?*

## ນຳໃຊ້ໃນຊີວິດ

ພວກເຮົາສາມາດວາງໃຈພຣະເຈົ້າທີ່ຈະຊ່ວຍເຮົາໃນຄວາມຫຍຸ້ງຍາກຂອງເຮົາ. ແຕ່ລະຊື່ຂອງພຣະເຈົ້າເພີ່ມຄວາມຊື່ນຊົມໃນຄວາມຮັກແລະຄວາມຫ່ວງໃຍຂອງພຣະອົງ. ຈົ່ງເລືອກການນຳໃຊ້ນຶ່ງຫຼືສອງຂໍ້ຕໍ່ລົງໄປນີ້ເພື່ອຊ່ວຍໃຫ້ທ່ານວາງໃຈພຣະເຈົ້າເລິກເຊິ່ງ.

- **ເບິ່ງໃນ.** ຈົ່ງຕຶກຕອງສິ່ງທີ່ເຮັດໃຫ້ທ່ານຮູ້ສຶກບໍ່ປອດພັຍ. ແມ່ນຫຍັງພາໃຫ້ທ່ານຢ້ານ.
- **ເບິ່ງຂຶ້ນ.** ໃຊ້ພຣະຄັມພີເປັນແຫຼ່ງເພື່ອຊອກຫາຊື່ອື່ນຂອງພຣະເຈົ້າ. ປັກຕາເບິ່ງຂຶ້ນຫາພຣະອົງເວລາອະທິຖານແລະຍອມມອບຄວາມຫ່ວງໃຍຂອງທ່ານໃຫ້ພຣະອົງ.
- **ເບິ່ງອອກ.** ຈົ່ງຊອກຫາເພື່ອນຄົນນຶ່ງທີ່ກຳລັງປະສົບຄວາມຍາກລຳບາກຢູ່. ຈົ່ງຊູໃຈໂດຍແບ່ງປັນມູມມອງເຫຼົ່ານີ້ແກ່ເພື່ອນທ່ານ. ແທນທີ່ຈະປ້ອງກັນເກີນສ່ວນ ຫຼື ກັງວົນຕລອດ, ຈົ່ງໃຊ້ການຮຽນນີ້ເພີ່ມການວາງໃຈຂອງທ່ານໃນພຣະເຈົ້າ. ຈົ່ງປະຄວາມກະວົນກະວາຍຂອງພວກທ່ານໄວ້ກັບພຣະອົງ, ເພາະວ່າພຣະອົງຊົງຫ່ວງໃຍທ່ານຢູ່ (1 ເປໂຕ 5:7).

**ອຸປຖັມໂດຍ ລາວຊາວເຫີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**